ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຊາວໜຸ່ມ ທຫລ ຍົກລະດັບຄວາມຮູ້ກ່ຽວກັບ ການຄຸ້ມຄອງລະບົບຊຳລະສະສາງ, ທ່າອ່ຽງ ແລະ ສິ່ງທ້າທາຍ




ຄະນະຊາວໜຸ່ມຮາກຖານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດສຳມະນາຫົວຂໍ້: ການຄຸ້ມຄອງລະບົບຊຳລະສະສາງໃນ ສປປ ລາວ: ທ່າອ່ຽງ ແລະ ສິ່ງທ້າທາຍເຊິ່ງໄດ້ຈັດຂຶ້ນໃນວັນທີ 27 ກຸມພາ 2019 ທີ່ຫ້ອງປະຊຸມ ທຫລ ນະຄອນຫຼວງວຽງຈັນ, ໂດຍການເຂົ້າຮ່ວມຂອງສະຫາຍ ໝູໄຊ ພູມສຸວັນ ຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ, ຮອງຫົວໜ້າກົມ ບໍລິການ ທຫລ ພ້ອມນີ້ກໍ່ມີບັນດາສະມາຊິກຊາວໜຸ່ມທີ່ມາຈາກບັນດາກົມພາຍໃນ ທຫລ ເຂົ້າຢ່າງພ້ອມພຽງ.

ໃນການສຳມະນາຄັ້ງນີ້ ເປັນການສ້າງຄວາມເຂົ້າໃຈໃຫ້ແກ່ບັນດາສະມາຊິກຊາວໜຸ່ມຮາກຖານ ທຫລ ສາມາດກຳໄດ້ວຽກງານການຄຸ້ມຄອງລະບົບຊຳລະສະສາງຊຶ່ງກົດໝາຍ ທຫລ (ສະບັບໃໝ່) ໄດ້ກຳນົດໃຫ້ເປັນໜຶ່ງໃນວຽກງານສາມເສົ້າຄ້ຳເສດຖະກິດມະຫາພາກຂອງ ທຫລ ແລະ ຄຽງຄູ່ກັບການຄຸ້ມຄອງສະຖຽນລະພາບທາງດ້ານເງິນຕາ ແລະ ຄວາມໝັ້ນຄົງຂອງສະຖາບັນການເງິນ.

ການພັດທະນາ ແລະ ການຄຸ້ມຄອງລະບົບສະສາງດັ່ງກ່າວ ເປັນວຽກງານໃໝ່ ທີ່ ທຫລ ໄດ້ເຫັນຄວາມຈຳເປັນ ໂດຍອີງໃສ່ການສັງເກດຕິລາຄາທ່າອ່ຽງການພັດທະນາ ແລະ ປ່ຽນແປງຂອງການໃຫ້ບໍລິຫານຊຳລະສະສາງຂອງສາກົນ ທີ່ກຳລັງມີການປ່ຽນແປງຂອງການໃຫ້ບໍລິຫານຊຳລະສະສາງຂອງສາກົນ ທີ່ກຳລັງມີການປ່ຽນແປງຮູບແບບ ແລະ ຂະຫຍາຍຕົວຢ່າງໄວຕາມລະດັບເຕັກໂນໂລຊີໃໝ່. ການປ່ຽນແປງດັ່ງກ່າວ ແມ່ນໄດ້ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມ ໃຫ້ບັນດາທະນາຄານ ແລະ ສະຖາບັນການເງິນ ຕ້ອງໄດ້ປັບຕົວ (ເພາະຄວາມສະດວກສະບາຍໃນການດຳເນີນທຸລະກຳຊຳລະສະສາງ ແມ່ນປັດໃຈສຳຄັນໜຶ່ງໃນການເລືອກວ່າຈະຝາກເງິນ ຫຼື ໃຊ້ບໍລິຫານຢູ່ທະນາຄານແຫ່ງໄດ້), ພ້ອມນັ້ນ ກໍ່ເຮັດໃຫ້ມີຜູ້ບໍລິການຮູບແບບໃໝ່ເກີດຂຶ້ນເຊັ່ນ: ມີ WeChat ແລະ Alipay ໃນກໍລະນີ ສປ ຈີນ, ແລະ ລວມທັງປ່ຽນຮູບແບບການດຳເນີນທຸລະກິດທາງການເງິນຂອງສັງຄົມໂດຍລວມ ໃຫ້ເງິນສົດຫຼຸດໜ້ອຍລົງເທື່ອລະກ້າວ.




# ຂ່າວ-ພາບ: ທ ສົມພິດ ທຳມະວົງ

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ